ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ.....55...../ສກຂ

ອັດຕະປື, ວັນທີ ...27 ມີນາ 2026...

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

1. ພະແນກສຶກສາທິການ ແລະ ກິລາແຂວງ ອັດຕະປື ໄດ້ຮັບອະນຸມັດງົບປະມານການລົງທຶນກໍ່ສ້າງໂຄງຮ່າງພື້ນຖານຂອງແຂວງອັດຕະປື ປະຈຳປີ 2026 ເພື່ອນຳມາກໍ່ສ້າງ(ສ້ອມແປງ)ໂຄງຮ່າງພື້ນຖານການສຶກສາທີ່ແຂວງອັດຕະປື ໃນ 3 ເມືອງ ຄື: ເມືອງສະໜາມໄຊ, ເມືອງສາມັກຄີໄຊ, ເມືອງຊານໄຊ,

ພະແນກສຶກສາທິການ ແລະ ກິລາແຂວງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄວາມພ້ອມເຂົ້າຮ່ວມປະມູນສຳລັບວຽກດັ່ງກ່າວ ມີລາຍລະອຽດດັ່ງນີ້:

| ລ/ດ | ຊື່ໂຄງການ | ສັນຍາທີ | ໝາຍເຫດ |
|---|---|---|---|
| 1 | ໂຄງການສ້ອມແປງໂຮງຮຽນ ໃນ 3 ເມືອງ(ເມືອງສະໜາມໄຊ, ເມືອງສາມັກຄີໄຊ, ເມືອງຊານໄຊ). | 01 | |

2. ການປະມູນຈະດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ແມ່ນອະນຸມັດໃຫ້ທຸກໆບໍລິສັດທີ່ມີຄວາມພ້ອມ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ.
4. ບໍລິສັດທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ໃນໂມງລັດຖະການ, ທີ່ຂະແໜງບໍລິຫານ ແລະ ການເງິນ ( ພະແນກສຶກສາທິການ ແລະ ກິລາ ແຂວງ ອັດຕະປື ).
   - ໂທລະສັບ/ໂທລະສານ: 036 211015, 020 98889165, 020 99809855.
5. ເອກະສານປະມູນ ສາມາດຊື້ໄດ້ ເລີ່ມແຕ່ວັນທີ 10 ເມສາ 2026 ຫາ ວັນທີ 10 ພຶດສະພາ 2026 ໃນລາຄາ 1,000,000 ກີບ/ຊຸດ (ໜຶ່ງລ້ານກີບຕໍ່ໜຶ່ງຊຸດ).
6. ເອກະສານປະມູນຕ້ອງສົ່ງເຖິງພະແນກສຶກສາທິການ ແລະ ກິລາແຂວງກ່ອນ ເວລາ 9:00 ໂມງ ຂອງ ວັນທີ 13 ພຶດສະພາ 2026 ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງ ຊອງປະມູນຈະເປີດໃນເວລາ 9:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າ ຂອງ ຄະນະກຳມະການປະມູນແລະຕົວແທນ ຂອງ ຜູ້ເຂົ້າແຂ່ງຂັນປະມູນ, ຊອງປະມູນໃດທີ່ສົ່ງຊ້າກ່ວາເວລາທີ່ກຳນົດໄວ້ໃນເອກະສານຈະບໍ່ໄດ້ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ.
7. ເອກະສານປະມູນ ຕ້ອງປະກອບໜັງສືຄ້ຳປະກັນການປະມູນມາພ້ອມກັບມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງລາຄາປະ

ມຸນ),   ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານທີ່ຖືກຕ້ອງກັບແບບຟອມທີ່ກຳນົດໄວ້ຢູ່ໃນ ເອກະສານປະມູນ ( ຫຼື ແຊັກທີ່ມີວິຊາ ).

8. ກອງປະຊຸມແນະນຳກ່ອນການປະມູນຈະໄດ້ຈັດຂຶ້ນ ໃນວັນທີ 10 ພຶດສະພາ 2026 ເລີ້ມແຕ່ເວລາ 8:30 ໂມງ ເປັນຕົ້ນໄປ ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງອັດຕະປື.

ຫົວໜ້າພະແນກ

ກະຊວງສຶກສາທິການ ແລະ ກິລາ
ພະແນກ
ສຶກສາທິການ
ແລະ ກິລາ
ແຂວງອັດຕະປື

ອຸດົມສິນ ສີຊານົນ